## ສະຖາບັນຄົ້ນຄວ້າວິະຍາສາດການສຶກສາ ສະຫຼຸບຜົນງານໜຶ່ງປີຜ່ານມາ

ໃນຕອນເຊົ້າຂອງວັນທີ 9 ມິຖຸນາ 2014 ທີ່ຫ້ອງປະຊຸມໃຫຍ່ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ຈັດກອງປະຊຸມສະຫຼຸບຜົນງານປະຈຳສົກປີ 2013-2014 ໂດຍການເປັນປະທານ ຂອງທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ ມີ ທ່ານ ດຣ ອ່ອນແກ້ວ ນວນນະວົງ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາການສຶກສາ ພ້ອມດ້ວຄະນະ ແລະ ບັນດາຫົວໜ້າສູນຮອງສູນ ຫົວໜ້າພະແນກຮອງພະແນກ ແລະ ພະນັກງານວິຊາການທັງໝົດໃນ ສ.ວ.ສ 80 ກ່າວທ່ານເຂົ້າຮ່ວມ.







ໃນພິທີດັ່ງກ່າວ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາໄດ້ຜ່ານບົດສະຫຼຸບຜົນງານ ຕະຫຼອດໜຶ່ງປີຜ່ານມາ ສ.ວ.ສ ໄດ້ມີຜົນງານພົ້ນເດັ່ນຫຼາຍດ້ານ **ການສຶກສາກ່ອນໄວ້ຮຽນ:** ສຳເລັດການຈັດພິມປຶ້ມອະນຸບານປີທີ 1, ສ້າງຕົ້ນສະບັບປຶ້ມອະນຸບານປີທີ 3, ສື່ການສອນສຳລັບກຸ່ມຮຽນຜ່ານການຫຼິ້ນ, ກຸ່ມເດັກ 3-4ປີ ແລະ ອື່ນໆໃນໂຄງການຮ່ວມມືກັບອົງການ UNICEF, EFA-FTI ເປັນຕົ້ນ. **ຂັ້ນປະຖົມສຶກສາ:** ໄດ້ກວດແກ້ຕົ້ນສະບັບປຶ້ມແບບຮຽນ ແລະ ຄູ່ມືຄູພາສາລາວ, ຄະນິດສາດ, ຄຸນສົມບັດສຶກສາ ແລະ ໂລກອ້ອມຕົວ ປ.1, ປ.2 ນອກນັ້ນກໍໄດ້ປະຕິບັດໂຄງການຍ່ອຍທົດລອງໃຊ້ອຸປະກອນເສີມຊ່ວຍການຮຽນການສອນພາສາອັງກິດຂັ້ນ ປ.3, ປ.4, ການຮຽນການສອນເສີມສຳລັບນັກຮຽນຊົນເຜົ່າຂັ້ນອະນຸບານ 1,2 ແລະ ຂັ້ນ ປ.1 ແລະ ປ.2. **ຂັ້ນມັດທະຍົມສຶກສາ**: ໄດ້ຈັດພິມປຶ້ມ ມ.4, ສຳເລັດການສ້າງຕົ້ນສະບັບປຶ້ມແບບຮຽນ-ຄູ່ມື ມ.5, ດຳເນີນການສ້າງຕົ້ນສະບັບປຶ້ມແບບຮຽນຕ່າງໆ ສຳລັບຂັ້ນ ມ.6,

**ວຽກງານວິໄຈ:** ສຳເລັດບົດລາຍງານ ແລະ ການຈັດຕັ້ງກອງປະຊຸມເຜີຍແຜ່ບົດລາຍງານຂອງ ASLO, EGRA, PASEC; **ວຽກງານເຕັກໂນໂລຊີການສຶກສາ:** ຜະລິດ, ຈັດພິມ ແລະ ຈຳໜ່າຍວາລະສານ,ຜະລິດລາຍການວິທະຍຸ ແລະ ໂທລະພາບສຶກສາໃໝ່ ລາຍການສອນວິທະຍາສາດ, ຄະນິດສາດຊັ້ນມັດທະຍົມຕົ້ນ (144 ບົດ). **ວຽກຫ້ອງສະໝຸດ:** ສະໜອງປື້ມໃຫ້ໂຮງຮຽນ ແລະ ພາກສ່ວນຕ່າງໆ ບໍລິການການອ່ານ, ຂຶ້ນທະບຽນ ແລະ ຈັດ, ຕາມລະບຽບປື້ມເພື່ອອຳນວຍຄວາມສະດວກໃນການຄົ້ນຫານຳໃຊ້. **ວຽກງານການຮ່ວມມືກັບພາຍນອກ**: ໄດ້ຮ່ວມມືກັບ TICA, ສະຖານທູດຝຣັ່ງປະຈຳລາວ, ສະຖານທູດອັງກິດ WB, UNICEF, UNESCO, JICA, SEAMEO INNOTECH, ອົງການສະມາຄົມຄົນພິການແຫ່ງຊາດລາວ, ອົງການ Room to Read, SVA, ຮ່ວມມືກັບກົມກອງ ແລະ ສູນຕ່າງໆ. ໄລຍະນີ້ເປັນໄລຍະທີ່ ສ.ວ.ສ ໄດ້ສືບຕໍ່ສຸມທຸກກຳລັງປະຕິບັດແຜນປະຕິຮູບລະບົບການສຶກສາແຫ່ງຊາດເວົ້າລວມ, ເວົ້າສະເພາະແມ່ນປະຕິຮູບຫຼັກສູດທຸກຂັ້ນຮຽນນັບແຕ່ຂັ້ນອະນຸບານ, ປະຖົມ ຈົນຮອດຂັ້ນມັດທະຍົມສຶກສາ ໂດຍການຜັນຂະຫຍາຍແຜນພັດທະນາການສຶກສາສົກຮຽນ 2013-2014 ທີ່ກະຊວງສຶກສາທິການ ແລະ ກິລາວາງອອກ.

ເພື່ອເປັນການຊົມເຊີຍ ຜົນງານອັນພົ້ນເດັ່ນດັ່ງກ່າວກະຊວງສຶກສາທິການ ແລະ ກິລາໄດ້ມອບໃບຍ້ອງຍໍໃຫ້ບັນດາພະນັກງານຜູ້ທີ່ມີຜົນງານດີເດັ່ນຈຳນວນ 27 ທ່ານ ໃນໂອກາດດຽວກັນນີ້ ສູນກາງສະຫະພັນແມ່ຍິງລາວກໍໄດ້ມອບໃບຍ້ອງຍໍໃຫ້ພະນັກງານຜູ້ທີ່ປະຕິບັດຂໍ້ແຂ່ງຂັນ 3ດີ ໄດ້ຊັບຊ້ອນຕື່ມອີກ 25 ທ່ານ. ນອກຈາກນີ້ແລ້ວທາງ ສ.ວ.ສ ກໍຍັງໄດ້ມອບໃບຍ້ອງຍໍໃຫ້ພະນັກງານຜູ້ທີ່ຫັນຫ້າວໃນການຈັດຕັ້ງປະຕິບັດວຽກງານຕື່ມອີກ 45 ທ່ານ ໂດຍແມ່ນ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາໃຫ້ກຽດຂຶ້ນມອບ. ໃນຕອນທ້າຍທ່ານລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ ກໍໄດ້ໃຫ້ຄວາມຄິດເຫັນຕໍ່ກອງປະຊຸມ ທ່ານໄດ້ເນັ້ນເຖິງການສ້າງຫຼັກສູດການຮຽນ-ການສອນ ຕ້ອງໃຫ້ສອດຄ່ອງກັບຜູ້ຮຽນທີ່ຈະຮັບເອົາຄວາມຮູ້ ຫຼື ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ, ຮຽນຮ້ອງໃຫ້ພະນັກງານທັງໝົດຕ້ອງຮັກຈັນຍາບັນໃນວິຊາຊີບຂອງຕົນ, ພ້ອມດຽວກັນນີ້ທ່ານຍັງຍ້ອງຍໍຊົມເຊີຍຜົນງານຕ່າງໆຂອງ ສ.ວ.ສ ຍາດມາໄດ້ ແລະ ໃຫ້ສືບຕໍ່ສ້າງຜົນງານກ້າວຂຶ້ນໄປເລື້ອຍໆ.

(ແສງ ສຶກສາໃໝ່ 59966995)